ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ ເລກທີ 0255 /ກງ

ນະຄອນຫຼວງວຽງຈັນ, ວັນທີ 26 ມັງກອນ 2023

# ໜັງສືແຈ້ງການ

ຮຽນ: - ທ່ານ ບັນດາລັດຖະມົນຕີກະຊວງ, ຫົວໜ້າອົງການທຽບເທົ່າຂັ້ນສູນກາງ ທີ່ນັບຖື;
- ທ່ານ ເຈົ້າຄອງນະຄອນຫຼວງ, ບັນດາເຈົ້າແຂວງ ໃນຂອບເຂດທົ່ວປະເທດ;
- ບັນດາ ທ່ານ ເຈົ້ານະຄອນ, ເຈົ້າເມືອງ, ເທດສະບານ;
- ບັນດາ ວິສາຫະກິດຂອງລັດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ແຈ້ງການນຳໃຊ້ເອກະສານການວ່າຈ້າງທີ່ປຶກສາສຳລັບການນຳໃຊ້ງົບປະມານແຫ່ງລັດ.

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ສະບັບເລກທີ 18/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 3887/ກງ, ລົງວັນທີ 09 ທັນວາ 2022 ວ່າດ້ວຍ ການຮັບຮອງເອົາເອກະສານການວ່າຈ້າງທີ່ປຶກສາສຳລັບການນຳໃຊ້ງົບປະມານແຫ່ງລັດ;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 4485/ຄຊລ, ລົງວັນທີ 26 ທັນວາ 2022.

ກະຊວງການເງິນ ໃນນາມເປັນເຈົ້າການສ້າງ ແລະ ປັບປຸງນິຕິກຳທີ່ຕິດພັນກັບວຽກງານການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຊຶ່ງຮອດປະຈຸບັນໄດ້ຍົກລະດັບດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບເລກທີ 03/ນຍ, ລົງວັນທີ 09 ມັງກອນ 2004 ໃນເມື່ອກ່ອນມາ ເປັນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ພ້ອມດຽວກັນນັ້ນ, ຮອດປະຈຸບັນໄດ້ສ້າງ ແລະ ປັບປຸງສຳເລັດເອກະສານການວ່າຈ້າງທີ່ປຶກສາແມ່ນຈະນຳໃຊ້ສະເພາະການຄັດເລືອກເອົາທີ່ປຶກສາເປັນບຸກຄົນ ແລະ ນິຕິບຸກຄົນພາຍໃນປະເທດ ທີ່ນຳໃຊ້ງົບປະມານແຫ່ງລັດຮ້ອຍເປີເຊັນ ເຂົ້າໃນການວ່າຈ້າງ ຊຶ່ງຕົວແບບເອກະສານດັ່ງກ່າວຜ່ານມາບໍ່ມີນຳໃຊ້ ປະກອບມີດັ່ງນີ້:

1. ເອກະສານຈັດຈ້າງ "ຕາມຄຸນວຸດທິ ແລະ ຈັດຈ້າງຈາກແຫຼ່ງດຽວ";
2. ເອກະສານຈັດຈ້າງ "ຕາມຄຸນນະພາບ ແລະ ລາຄາ, ສະເພາະຄຸນນະພາບ, ຕາມງົບປະມານຂາດຕົວ ແລະ ຕາມມູນຄ່າຕໍ່າສຸດ".

ດັ່ງນັ້ນ, ຈຶ່ງອອກແຈ້ງການມາຍັງບັນດາທ່ານເພື່ອຊາບ ແລະ ນຳໃຊ້ເອກະພາບໃນຂອບເຂດທົ່ວປະເທດຕາມແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີກະຊວງການເງິນ

ບຸນໂຈມ ອຸບົນປະເສີດ